ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສໍານັກງານໃຫຍ່

ເລກທີ: 1870/ທຄຕລ.2025

ນະຄອນຫຼວງວຽງຈັນ, ວັນທີ: 20 JUN 2025

# ໜັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ ແລະ ວິສາຫະກິດ ທໍາຄວາມສະອາດ ທີ່ນັບຖື.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາທໍາຄວາມສະອາດສະຖານທີ່ເຮັດວຽກ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດ ແລະ ວິສາຫະກິດ ທໍາຄວາມສະອາດ ກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງປະມູນລາຄາທໍາຄວາມສະອາດສະຖານທີ່ເຮັດວຽກຂອງ ທຄຕລ ຢູ່ພາຍໃນນະຄອນຫຼວງວຽງຈັນ ດັ່ງລາຍລະອຽດລຸ່ມນີ້:

## I. ລາຍການໜ້າວຽກປະກອບມີ

| ລ/ດ | ລາຍການໜ້າວຽກ | ໄລຍະເວລາໃນການຈັດຕັ້ງປະຕິບັດ | | | ໝາຍເຫດ |
|---|---|---|---|---|---|
| | | ປະຈໍາວັນ | ປະຈໍາອາທິດ | ປະຈໍາເດືອນ | |
| 1 | ປັດກວາດ, ຖູປຽກ-ແຫ້ງ ພື້ນຫ້ອງເຮັດວຽກ ດ້ວຍນໍ້າຢາສະເພາະ ແລະ ດູດຝຸ່ນດ້ວຍເຄື່ອງຈັກ | ✓ | | | |
| 2 | ເຊັດຝຸ່ນຕາມແອ່ນ, ໂຕະ, ຕັ່ງ, ຕູ້, ຄອມພິວເຕີ, ເຄົາເຕີ, ບານປະຕູແກ້ວ ແລະ ເຄື່ອງເຟີນິເຈີ້ ດ້ວຍນໍ້າຢາສະເພາະ | ✓ | | | |
| 3 | ເກັບຂີ້ເຫຍື້ອທຸກໆຫ້ອງເອົາໄປຖິ້ມຕາມຈຸດທີ່ກໍານົດ ພ້ອມທັງລ້າງກະຕ່າ ແລະ ຖົງໃສ່ຂີ້ເຫຍື້ອ | ✓ | | | |
| 4 | ສຽບ-ຖອດ ສາຍໄຟໝໍ້ຕົ້ມນໍ້າ ແລະ ເຕີມນໍ້າ | ✓ | | | |
| 5 | ຂັດລ້າງຊັກໂຄກ ແລະ ໂຖປັດຊະວະດ້ວຍນໍ້າຢາຂ້າເຊື້ອ | ✓ | | | |
| 6 | ລ້າງອ່າງລ້າງມື, ເຄົາເຕີ້ ແລະ ກ໊ອກນໍ້າໃນຫ້ອງນໍ້າ ດ້ວຍນໍ້າຢາຂ້າເຊື້ອ | ✓ | | | |
| 7 | ຂັດລ້າງ ແລະ ຖູພື້ນຫ້ອງນໍ້າ ດ້ວຍນໍ້າຢາຂ້າເຊື້ອ | ✓ | | | |
| 8 | ເຊັດແອ່ນພາຍໃນຫ້ອງນໍ້າ ແລະ ເຊັດ-ຂັດລ້າງຕາມຝາຫ້ອງນໍ້າດ້ວຍນໍ້າຢາຂ້າເຊື້ອ | ✓ | | | |
| 9 | ກວດກາ ແລະ ເຕີມເຄື່ອງໃຊ້ພາຍໃນຫ້ອງນໍ້າ ເຊັ່ນ: ເຈ້ຍທິດຊູ, ນໍ້າຢາລ້າງມື, ນໍ້າຫອມດັບກິ່ນ/ກ້ອນດັບກິ່ນ, ຖົງຮອງກະຕ່າຂີ້ເຫຍື້ອ | ✓ | | | |
| 10 | ລ້າງກະຕ່າ ແລະ ຖົງຂີ້ເຫຍື້ອ ພາຍໃນຫ້ອງນໍ້າ | ✓ | | | |



ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5

| | | | | | |
|---|---|---|---|---|---|
| 11 | ເກັບຂີ້ເຫຍື້ອຢູ່ຫ້ອງນໍ້າໄປຖິ້ມຕາມຈຸດທີ່ກໍານົດ | ✓ | | | |
| 12 | ປັດກວາດ, ເຊັດຖູຕາມຂັ້ນໄດ ພາຍໃນ-ພາຍນອກ, ລະບຽງດ້ານໜ້າ ແລະ ດ້ານຫຼັງ | ✓ | | | |
| 13 | ລ້າງຈອກ, ຈານ, ຖ້ວຍ ແລະ ບ່ວງ ສໍາລັບຮັບແຂກ ແລະ ພະນັກງານ | ✓ | | | |
| 14 | ຫົດນໍ້າດອກໄມ້ພາຍໃນອາຄານຂອງຫ້ອງຮັບແຂກ ແລະ ພະນັກງານ | ✓ | | | |
| 15 | ປັດຝຸ່ນ, ແລະ ອະນາໄມໃຍແມງມຸມ ແລະ ເພດານ | | ✓ | | |
| 16 | ປັດຝຸ່ນຕາມປະຕູ, ປ່ອງຢ້ຽມ, ເຫຼັກກັນຂະໂມຍ, ສະວິດໄຟ, ປັກໄຟ, ຖັງດັບເພີງ, ເຄື່ອງດູດອາກາດພາຍໃນຫ້ອງເຮັດວຽກ ແລະ ຫ້ອງນໍ້າ | | ✓ | | |
| 17 | ລ້າງພື້ນດ້ວຍເຄື່ອງຈັກ ກໍລະນີມີຄາບດໍາ ແລະ ຄາບເປື້ອນຝັງແໜ້ນ | | | ✓ | |

## II. ສະຖານທີ່ ແລະ ບໍລິມາດ

1. ຕຶກ A ຊັ້ນ 2 ຕັ້ງຢູ່ ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເນື້ອທີ່ທັງໝົດ 363 ຕາແມັດ ມີຫ້ອງນໍ້າ 2 ຫ້ອງ;
2. ຫຼັງຕຶກ A ຊັ້ນ 1, ຊັ້ນ 2 ແລະ ຊັ້ນ 3 ຕັ້ງຢູ່ ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເນື້ອທີ່ທັງໝົດ 125 ຕາແມັດ ມີຫ້ອງນໍ້າ 1 ຫ້ອງ;
3. ຕຶກ C ຊັ້ນ 2 ຕັ້ງຢູ່ ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເນື້ອທີ່ທັງໝົດ 500 ຕາມແມັດ ມີຫ້ອງນໍ້າ 2 ຫ້ອງ;
4. ຕຶກຕະຫຼາດຫຼັກຊັບ ຊັ້ນ 1 ຕັ້ງຢູ່ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ເນື້ອທີ່ທັງໝົດ 178 ຕາແມັດ;
5. ຕຶກອາຄານໜ່ວຍບໍລິການຮ່ອງແກ ຊັ້ນ 2 ແລະ ຊັ້ນ 3 ຕັ້ງຢູ່ບ້ານຮ່ອງແກ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ເນື້ອທີ່ທັງໝົດ 266 ຕາແມັດ ມີຫ້ອງນໍ້າ 4 ຫ້ອງ.

## III. ເງື່ອນໄຂການປະກອບເອກະສານການປະມູນ

### 1. ເອກະສານຊອງມີ 1 (ບໍ່ປິດຊອງ)

1) ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດໍາເນີນທຸລະກິດ (ສໍາເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ ປີ 2023/2024);
2) ເອກະສານກ່ຽວກັບມາດຕະຖານໃຫ້ລະບຸຄົບຖ້ວນກ່ຽວກັບ ວິທີການປະຕິບັດວຽກ, ວັດສະດຸ, ຍີ່ຫໍ້/ລຸ້ນ ເຊິ່ງບໍລິສັດຕ້ອງຮັບຜິດຊອບເອງທັງໝົດ ເປັນຕົ້ນແມ່ນ ອຸປະກອນຮັບໃຊ້ທໍາຄວາມສະອາດ, ນໍ້າຢາທໍາຄວາມສະອາດ, ຜ້າແພທີ່ນໍາໃຊ້ ໃຫ້ຄົບຖ້ວນ ແລະ ພຽງພໍໃນການນໍາໃຊ້ຕົວຈິງ ລວມເຖິງຮັບຜິດຊອບພາຫະນະເດີນທາງໄປແຕ່ລະຈຸດເອງ. ສໍາລັບທິດຊູ ແລະ ຖົງຢາງໃສ່ຂີ້ເຫຍື້ອແມ່ນ ທຄຕລ ຈະປະກອບໃຫ້;
3) ຄຸນວຸດທິຂອງບໍລິສັດ ແລະ ປະສົບການທີ່ເຮັດວຽກດັ່ງກ່າວ ຫຼື ວຽກທີ່ຄ້າຍຄືລັກສະນະດຽວກັນ;
4) ກໍານົດຍື່ນຊອງມາດຕະຖານເຕັກນິກ ຈະປິດຮັບວັນທີ **11/07/2025** ເວລາ **15:30 ໂມງ** ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສໍານັກງານໃຫຍ່ ທີ່ປ່ອງຂາອອກ-ຂາເຂົ້າ ອາຄານ C ຊັ້ນ 4.

## 2. ເອກະສານຊອງທີ 2 (ປິດຊອງ)

1) ໃບສະເໜີລາຄາຕ້ອງລະບຸເປັນລາຄາລວມທັງໝົດ 5 ຈຸດ ທີ່ເປັນລາຄາຕໍ່ເດືອນ ແລະ ຕໍ່ປີ ພ້ອມທັງສະແດງລາຄາທີ່ລວມອາກອນມູນຄ່າ ທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ;
2) ໃນວັນທີ **15/07/2025** ເວລາ **9:00** ໂມງ ແມ່ນມື້ເປີດຊອງປະມູນ ແຈ້ງໃຫ້ບໍລິສັດຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມອາຄານ C ຊັ້ນ 5 ຫ້ອງ 5/2;
3) ຜູ້ເຂົ້າຮ່ວມຍື່ນຊອງປະມູນ ຕ້ອງວາງເງິນຄໍ້າປະກັນການປະມູນຕໍ່າສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໃຫ້ໂດຍທະນາຄານພາຍໃນ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 30/08/2025) ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ) ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.

## IV. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ຊະນະການປະມູນ

1) ຖ້າຜູ້ຊະນະການປະມູນປະຕິເສດການໃນເຊັນສັນຍາກັບ ທຄຕລ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ;
2) ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ໄລຍະເວລາ 01 ປີ (ປີຕໍ່ປີ) ແລະ ຄ່າທໍານຽມໃນການຈົດທະບຽນສັນຍາ ແມ່ນຄວາມຮັບຜິດຊອບຂອງຜູ້ຮັບເໝົາ;
3) ການປະຕິບັດວຽກແມ່ນເລີ່ມແຕ່ເວລາ 7:00-17:00 ໂມງ ວັນຈັນ-ສຸກ ກໍລະນີມີຄວາມຈໍາເປັນແມ່ນໃຫ້ເຂົ້າມາປະຕິບັດວຽກໃນ ວັນເສົາ-ອາທິດ ຕື່ມເພື່ອເຮັດໃຫ້ສະຖານທີ່ສະອາດ;
4) ການຊໍາລະຄ່າບໍລິການແມ່ນເປັນລາຍເດືອນລວມອາກອນມູນຄ່າເພີ່ມ ດ້ວຍສະກຸນເງິນກີບ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້ດ້ວຍ.

**ຜູ້ອໍານວຍການ**

ນ. ສາຍສະໝອນ ຈັນທະຈັກ

**ຜູ້ປະສານງານ:**

ນ. ຫຼ້າໄພວັນ ປັນນະວົງ 020 22233419